# ການຮັບມືກັບຄູສອນປອມ



ບົດຮຽນທີ 12 ເດືອນກັນຍາ ທີ 19, 2026


"ເພາະວ່າເຄື່ອງອາວຸດຂອງເຮົາບໍ່ເປັນ
ຂອງຝ່າຍໂລກ, ແຕ່ມີຣິດອຳນາດ
ຈາກພຣະເຈົ້າທີ່ທຳລາຍຄ້າຍອັນ
ເຂັ້ມແຂງໄດ້ ຄືທຳລາຍຄວາມຄິດທີ່ມີ
ເຫດຜົນອັນບໍ່ຈິງ" (2 ກຣທ 10:4, )

ອຈ ໂປໂລຕັ້ງໃຈທີ່ຈະຕິດຕາມຂ່າວສານຂອງຄຣິດຕະຈັກທັງໝົດ, ຍ້ອນຫຍັງ? ເພື່ອທີ່ຈະຮູ້ ຖ້າວ່າພວກເຂົາຕ້ອງການການຊ່ວຍເຫລືອ, ເພື່ອທີ່ຈະໄປຢ້ຽມຢາມ, ຕ້ອງການການປອບໂຍນ, ຄຳຄຳເວົ້າໜູນໃຈ (2 ກຣທ 11:28).

ບາງຄັ້ງເພິ່ນກໍ່ໄດ້ຮັບແຈ້ງກ່ຽວກັບຄູສອນປອມ, ທີ່ເຮັດໃຫ້ຜູ້ເຊື່ອສະດຸດ. ເມື່ອເກີດເຫດການແບບນີ້ຂຶ້ນ ອຈ ໂປໂລ ກໍ່ເຕັມໄປດ້ວຍຄວາມໂກດແຄ້ນ(2 ກຣທ 11:29).

ໃນຕອນທ້າຍຂອງຈົດໝາຍສະບັບທີສອງທີ່ສົ່ງເຖິງຊາວໂກຣິນໂທ, ອຈ ໂປໂລ ໄດ້ກ່າວເຖິງບັນຫາຂອງຄູສອນປອມເຫລົ່ານັ້ນ. ແລະ ພວກເຮົາຈະໄດ້ແຍກລະບຸວ່າເປັນຄູສອນປອມໄດ້ແນວໃດ? ແລ້ວ ພວກເຮົາຈະເອົາຊະນະພວກເຂົາໄດ້ແນວໃດ?





**ການຕໍ່ສູ້ຝ່າຍຈິດວິນຍານ:**

- ອາວຸດສຳລັບການໂຈມຕີ (2 ກຣທ 10:1-11)
- ການປ້ອງກັນທີ່ຖືກວິທີ (2 ກຣທ 10:12-18)

**ການຮັບມືກັບຜູ້ສອນປອມ:**

- ຜູ້ຫລອກລວງທີ່ປອມແປງຄ້າຍຄືຜູ້ປະກາດພຣະຄຳ(2 ກຣທ11:1-15)
- ອຈ ໂປໂລ ແລະ ຜູ້ສອນປອມ (2 ກຣທ 11:16-31)
- ການກວດສອບຕົນເອງ ແລະ ໄຊຊະນະ (2 ກຣທ 12:14-13:10)

# ການຕໍ່ສູ້ຝ່າຍ ຈິດວິນຍານ



# ອາວຸດສຳລັບການໂຈມຕີ



“ເພາະວ່າເຄື່ອງອາວຸດຂອງເຮົາບໍ່ເປັນຂອງຝ່າຍໂລກ, ແຕ່ມີຣິດອຳນາດຈາກພຣະເຈົ້າທີ່ທຳລາຍຄ້າຍອັນເຂັ້ມແຂງໄດ້ ຄືທຳລາຍຄວາມຄິດທີ່ມີເຫດຜົນອັນບໍ່ຈິງ” (2 ກຣທ 10:4, )



ອຈ ໂປໂລຖືກກ່າວຫາວ່າຂີ້ຂາດ ແລະ ອຸ້ມອ້າມໃນຊີວິດຈິງ ເຖິງວ່າເພິ່ນຈະເວົ້າແບບກົງໄປກົງມາໃນຈົດໝາຍຂອງເພິ່ນກໍ່ຕາມ. (2 ກຣທ 10:10).

ເພື່ອໂຕ້ຕອບຂໍ້ກ່າວຫານີ້ ເພິ່ນໄດ້ສະແດງໃຫ້ເຫັນຢ່າງຊັດເຈນວ່າ, ເພິ່ນຮູ້ສຶກວ່າເພິ່ນສາມາດເວົ້າຢ່າງກົງໄປກົງມາໄດ້ແບບດຽວກັນກັບໃນຈົດໝາຍ ແຕ່ເພິ່ນຈະບໍ່ໃຊ້ອາວຸດຝ່າຍໂລກເຊັ່ນ: ການໃຊ້ອຳນາດຜະເດັດການ, ການລົງໂທດທາງຮ່າງກາຍ, ຫລື ການຍົກຍ້ອງຕົນເອງ), ແຕ່ຈະໃຊ້ອາວຸດ ທີ່ຊົງພະລັງໃນພຣະເຈົ້າເທົ່ານັ້ນ (2 ກຣທ 10:2-4).

ອາວຸດເຫລົ່ານີ້ລວມເຖິງການກະທຳດ້ວຍຄວາມຖ່ອມໂຕ ແລະ ຄວາມອ່ອນໂຍນທີ່ມາຈາກພຣະຄຣິດ (ມທ 11:29). ແຕ່ຍັງລວມໄປເຖິງການຢືນຢັດການຕໍ່ຕ້ານຄວາມຜິດບາບ ດັ່ງທີ່ພຣະເຢຊູຊົງກະທຳ (ມທ 21:12-13), ຫລືເວົ້າຢ່າງຊັດເຈນ ກົງໄປກົງມາເມື່ອເຖິງເວລາ (ມທ 23:23-27).



ອຳນາດຂອງ ອຈ ໂປໂລ ໄດ້ຮັບມາຈາກພຣະຄຣິດ ແລະ ເພິ່ນຈະໃຊ້ມັນເພື່ອເສີມສ້າງ ບໍ່ແມ່ນເພື່ອທຳລາຍ (2 ກຣທ 10:8).



# ວິທີປ້ອງກັນທີ່ຖືກຕ້ອງ

"ເພາະຄົນທີ່ຍົກຍ້ອງຕົນເອງ ບໍ່ເປັນທີ່ນັບຖືແກ່ຜູ້ໃດ, ແຕ່ຄົນທີ່ໜ້ານັບຖືນັ້ນ ຄືຜູ້ທີ່ອົງພຣະຜູ້ເປັນເຈົ້າຊົງຍົກຍ້ອງ" (2 ກຣທ 10:18)

ນັກປັດສະຍາກຣີກ ໄດ້ຮຽກເກັບເງິນຈຳນວນຫລວງຫລາຍສຳລັບຄົນທີ່ຕ້ອງການຮຽນຈາກພວກເຂົາ. ເພື່ອດຶງດູດນັກຮຽນເຫລົ່ານັ້ນ ພວກເຂົາຈຶ່ງໂອ້ອວດຄວາມຮູ້, ສະຖານະທາງສັງຄົມ ຫລື ບຸກຄົນສຳຄັນທີ່ພວກເຂົາຮູ້ຈັກ ແລະ ເຄົາຣົບນັບຖື, ນີ້ແມ່ນວິທີການຂອງຄູສອນປອມທີ່ທຽມເທັດທີ່ແຊກຊຶມເຂົ້າມາໃນເມືອງໂກຣິນໂທເຊັ່ນກັນ. (2 ກຣທ 10:12; 11:19-20).






ແຕ່ ອຈ ໂປໂລ ບໍ່ໄດ້ເອີ້ນເກັບເງິນຈາກຄວາມຮູ້ຂອງເພິ່ນ, ເພິ່ນບໍ່ໄດ້ນຳສະເໜີຈົດໝາຍໃນແງ່ຂອງການຮັບຮອງ ແລະເພິ່ນກໍ່ບໍ່ໄດ້ເວົ້າໂອ້ອວດຕົນເອງ, ແຕ່ເພິ່ນຊ້ຳຖືກດູຖູກໝິ່ນປະໝາດ, ແລ້ວເພິ່ນຈະແກ້ໄຂແນວໃດ?







ເບິ່ງຄືວ່າ ເພິ່ນຕ້ອງໄດ້ຮັບການຍົກຍ້ອງຕໍ່ໜ້າຊາວໂກຣິນໂທ ເພື່ອທີ່ຈະໄດ້ຮັບການຍອມຮັບຈາກພວກເຂົາ. ແຕ່ບໍ່ໄດ້ໝາຍຄວາມວ່າ ອຈ ໂປໂລ ຈຳເປັນຕ້ອງຍົກຍ້ອງຕົນເອງ (ສພສ 27:2). ອຈ ໂປໂລກ່າວວ່າ ຂໍໃຫ້ພຣະເຈົ້າເປັນຜູ້ທີ່ຍົກຍ້ອງພວກເຮົາ (2 ກຣທ 10:18).

ຖ້າວ່າມີສິ່ງໃດທີ່ພວກເຮົາສາມາດໂອ້ອວດໄດ້ ກໍ່ຄືການຮູ້ຈັກພຣະອົງ ແລະ ເຊື່ອຟັງພຣະອົງ (ຢຣມຢ 9:24; 2 ກຣທ 10:17).



# ການຮັບມືກັບຜູ້ສອນ
# ປອມ

# ຜູ້ລໍ້ລວງທີ່ປອມໂຕເປັນອັກຄະສາວົກ

"ເພາະຄົນເຫຼົ່ານັ້ນ ເປັນພຽງແຕ່ຄູສອນປອມ ເປັນຄົນງານທີ່ຫລອກລວງ ແລະປອມຕົວເປັນອັກຄະສາວົກຂອງພຣະຄຣິດ."
2 ໂກຣິນໂທ 11:13



ອັຄ ໂປໂລ ປາດຖະໜາທີ່ຈະນໍາຄຣິດຕະຈັກທີ່ບໍຣິສຸດ ມາສູ່ພຣະຄຣິດ (2 ກຣທ 11:2). ແຕ່ຄຣິດຕະຈັກຕົກຢູ່ໃນອັນຕະລາຍທີ່ຈະຖືກຫລອກລວງຄືກັນກັບເອວາ, ແລະ ພວກເຂົາເຊົາທີ່ຈະເປັນເຈົ້າສາວຂອງພຣະເຢຊູ (2 ກຣທ 11:3).



ອັນຕະລາຍທີ່ແທ້ຈິງແມ່ນຫຍັງ? ຊາວຢິວທີ່ຍົກຍ້ອງຕົນເອງວ່າເປັນ ອັກຄະທູດຜູ້ຍິ່ງໃຫຍ່ ຂອງພຣະເຢຊູໄດ້ມາທີ່ເມືອງໂກຣິນໂທ ເພື່ອສອນ. ພວກເຂົາປຽບເໝືອນພຣະເຢຊູອີກອົງໜຶ່ງ ທີ່ມີຄໍາສອນອີກແບບໜຶ່ງທີ່ແຕກຕ່າງ (2 ກຣທ 11:4-5; ຄລຕ 1:8).



ການທີ່ໃຜບາງຄົນເທດສະໜາກ່ຽວກັບພຣະເຢຊູ ບໍ່ໄດ້ໝາຍຄວາມວ່າພວກເຂົາກໍາລັງສະແດງໃຫ້ພວກເຮົາເຫັນພຣະເຢຊູທີ່ແທ້ຈິງຕາມທີ່ເປີດເຜີຍໄວ້ໃນພຣະຄໍາພີ, ຄໍາເວົ້າຂອງພວກເຂົາອາດຈະຍອດຍ້ຽມ, ແຕ່ຊາຕານເອງກໍຮູ້ວິທີເວົ້າແບບອັດສະຈັນ ເພື່ອສະແດງຕົນເອງ ເປັນຄືກັນກັບທູດສະຫວັນແຫ່ງຄວາມສະຫວ່າງ(2 ກຣທ 11:14).



ໂດຍການກະທໍາ ແລະ ຄໍາເວົ້າຂອງພວກເຂົາ ເປັນສິ່ງທີ່ຜູ້ສອນທີ່ແທ້ຈິງສອນ (2 ກຣທ 11:9-10). ແຕ່ວ່າຄູສອນປອມນັ້ນ ຈະເຮັດເປັນເຄັ່ງສາສະໜາ, ແຕ່ໃຈຈິງເປັນແບບໜຶ່ງ, ບິດເບືອນພຣະຄໍາ, ເປັນຜູ້ເປີຍແຜ່ທີ່ຫລອກລວງທີ່ປອມໂຕເປັນສາວົກ (2 ກຣທ 11:13-15).

# ອລ ໂປໂລ ແລະ ຜູ້ສອນປອມ

"ພວກເຂົາເປັນຊາວເຮັບເຣີບໍ? ເຮົາກໍເປັນເໝືອນກັນ ພວກເຂົາເປັນຊົນຊາດອິດສະຣາເອນບໍ? ເຮົາກໍເປັນເໝືອນກັນ ພວກເຂົາເປັນເຊື້ອສາຍຂອງອັບຣາຮາມບໍ? ເຮົາກໍເປັນເໝືອນກັນ."2 ໂກຣິນໂທ 11:22



ແມ່ນຫຍັງແມ່ນຄວາມຄ້າຍຄືກັນ ລະຫວ່າງ ອລ ໂປໂລ ແລະ ຜູ້ສອນປອມເຫລົ່ານັ້ນ? ພວກເຂົາທັງໝົດແມ່ນຄົນຍິວ ແລະໄດ້ປ່ຽນມາເປັນຄຣິສຕຽນ (2 ກຣທ 11:22).

ແລ້ວແມ່ນຫຍັງທີ່ແຕກຕ່າງ? ນີ້ແມ່ນຈຸດເລີ່ມຕົ້ນທີ່ເຮັດໃຫ້ ອລ ໂປໂລ ໃຈຮ້າຍ: "ພວກເຂົາແມ່ນຜູ້ຮັບໃຊ້ຂອງພຣະຄຣິດບໍ? (ເຮົາຂໍເວົ້າດັ່ງຄົນເສຍສະຕິວ່າ) ເຮົາກໍເປັນລື່ນພວກເຂົາອີກ" (2 ກຣທ 11:23 ). ຖ້າວ່າພວກເຂົາໂອ້ອວດວ່າທົນທຸກເພື່ອພຣະຄຣິດ, ອລ ໂປໂລ ກໍ່ມີຄຸນສົມບັດຫລາຍກວ່ານັ້ນອີກ ຖືກຂ້ຽນຕີ; ຕິດຄຸກ; ຖືກຂົ່ມຂູ່; ຖືກກ້ອນຫີນແກ່ວງໃສ່; ເຮືອຂວ້າມໃນທະເລ; ຜະເຊີນກັບອັນຕະລາຍໃນທຸກສິ່ງ; ປະສົບກັບຄວາມຫິວ, ກະຫາຍນໍ້າ, ໜາວ, ແລະເປືອຍກາຍ; ແຕ່ຍັງຄົງຫ່ວງໃຍຕໍ່ຄຣິດຕະຈັກຢູ່ສະເໝີ (2 ກຣທ 11:23b-29).

ສິ່ງນີ້ທີ່ເຮັດອລ ໂປໂລ ເຊົາໃຈຮ້າຍ: ເພິ່ນບໍ່ຕ້ອງການໃຫ້ຄົນອື່ນເຂົ້າໃຈຜິດວ່າ ພວກເຂົາຕ້ອງການໂອ້ອວດໃນສິ່ງທີ່ພວກເຂົາເຮັດໄດ້ເພື່ອພຣະຄຣິດ, ການໂອ້ອວດ ຫລື ການອ້າງກຽດຕິຍົດ ທີ່ແທ້ຈິງຂອງພວກເຂົາແມ່ນການທີ່ພຣະຄຣິດເຮັດເພື່ອພວກເຂົາ ບໍ່ແມ່ນສິ່ງທີ່ພວກເຂົາເຮັດເພື່ອພຣະຄຣິດ



ຄວາມອ່ອນແອຂອງພວກເຂົາທີ່ເຮັດໃຫ້ຢາກເຂົ້າຫາເພິ່ງໃນພຣະຄຣິດ ແມ່ນຄວາມເຂັ້ມແຂງຂອງພວກເຂົາທີ່ຄວນເຮັດ (2 ກຣທ 11:30-31; 12:6-10).

# ການກວດສອບຕົນເອງ ແລະ ໄຊຊະນະ

"ຈົ່ງພິຈາລະນາເບິ່ງຕົນເອງວ່າ, ພວກເຈົ້າຕັ້ງຢູ່ໃນຄວາມເຊື່ອຫລືບໍ? ຈົ່ງພິສູດຕົວເອງສາ ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ພຣະເຢຊູຄຣິດ ເຈົ້າຊົງສະຖິດຢູ່ໃນພວກເຈົ້າ ເວັ້ນເສຍແຕ່ພວກເຈົ້າຈະຜ່ານການພິສູດນັ້ນບໍ່ໄດ້." 2 ໂກຣິນໂທ 13:5

ເວລາທີ່ອັຄ ໂປໂລ ຈະໄປຢ້ຽມຢາມເມືອງໂກຣິນໂທກໍ່ໃກ້ເຂົ້າມາແລ້ວ. ເພິ່ນຈະໄດ້ປະເຊີນກັບຫຍັງແດ່? ແລະ ຄວນປະຕິບັດຕົນແບບໃດ? (2 ກຣທ 13:1-2).



ເພິ່ນກຽມພ້ອມທີ່ຈະໃຊ້ມາດຕະການລົງໂທດທາງສາສະໜາຢ່າງເດັດຂາດ, ເພື່ອຟື້ນຟູຜູ້ທີ່ກັບໃຈ ແລະ ລົງໂທດຜູ້ທີ່ດື້ດ້ານ

ເພິ່ນຢ້ານວ່າເມື່ອໄປເຖິງແລ້ວ ຈະພົບວ່າ ຊາວໂກຣິນໂທນັ້ນຢູ່ໃນຄວາມຂັດແຍ້ງ ແລະ ຢູ່ໃນຄວາມບາບຕ່າງໆ. ເພິ່ນອາດຈະເສຍໃຈຍ້ອນຄວາມບາບທີ່ຍັງບໍ່ຍອມກັບໃຈຂອງພວກເຂົາ(2 ກຣທ 12:20-21).

ດັ່ງນັ້ນ, ກ່ອນເວລານັ້ນຈະມາເຖິງ, ຊາວໂກຣິນໂທຈຶ່ງໄດ້ໄຕ່ຕອງ ແລະ ກວດສອບຕົນເອງ (2 ກຣທ 13:5).





ສ່ວນ ອັຄ ໂປໂລ ເອງກໍ່ອະທິຖານຂໍໃຫ້ພວກເຂົາເຊົາເຮັດຄວາມຊົ່ວ ແລະ ຫັນມາເຮັດຄວາມດີ, ແລະ ໃຫ້ພວກເຂົາເປັນຜູ້ທີ່ສົມບູນແບບ(2 ກຣທ13:7-9).

“ປະຊາກອນຂອງພຣະເຈົ້າຈະຖືກນຳພາໄປສູ່ການສຶກສາພຣະຄຳພີ ເພື່ອເປັນສິ່ງປົກປ້ອງພວກເຂົາຈາກອິດທິພົນຂອງຄູສອນປອມ ແລະ ລິດທານຸພາບອັນລໍ້ລວງຂອງວິນຍານມືດ. ຊາຕານໃຊ້ທຸກກົນອຸບາຍທີ່ເປັນໄປໄດ້ເພື່ອຂັດຂວາງບໍ່ໃຫ້ມະນຸດໄດ້ຮັບຄວາມຮູ້ໃນພຣະຄຳພີ; ເພາະຄຳເວົ້າທີ່ຊັດເຈນຂອງພຣະຄຳພີນັ້ນເປີດເຜີຍການລໍ້ລວງຂອງມັນ. ໃນທຸກໆ ການຟື້ນຟູພັນທະກິດຂອງພຣະເຈົ້າ, ເຈົ້າແຫ່ງຄວາມຊົ່ວຮ້າຍຈະຖືກປຸກໃຫ້ມີກິດຈະກຳທີ່ຮຸນແຮງຍິ່ງຂຶ້ນ; ຕອນນີ້ນາງກຳລັງໃຊ້ຄວາມພະຍາຍາມຢ່າງສຸດກຳລັງສຳລັບການຕໍ່ສູ້ຄັ້ງສຸດທ້າຍກັບພຣະຄຣິດ ແລະ ບັນດາຜູ້ຕິດຕາມພຣະອົງ. [...] ສິ່ງທຽມເທັດຈະເໝືອນກັບສິ່ງແທ້ຢ່າງໃກ້ຊິດ ຈົນບໍ່ສາມາດແຍກແຍກລະຫວ່າງສອງສິ່ງນີ້ໄດ້ ເວັ້ນເສຍແຕ່ໂດຍພຣະຄຳພີບໍຣິສຸດເທົ່ານັ້ນ. ໂດຍຄຳພະຍານຂອງພຣະຄຳພີ, ທຸກຄຳກ່າວ ແລະ ທຸກການອັດສະຈັນຕ້ອງຖືກທົດສອບ.”

**EGW (The Great Controversy, p. 593)**